ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 05751 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 01 OCT 2018

# ຄຳແນະນຳເພີ່ມເຕີມ

ເຖິງ: ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີ ປະຈຳແຂວງໃນຂອບເຂດທົ່ວປະເທດ.

ເລື່ອງ: ການແຈ້ງເສຍພາສີ-ອາກອນ ເພື່ອປ່ຽນກຳມະສິດ ພາຫະນະ ແລະ ກົນຈັກໜັກ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ (ນຳເຂົ້າຊົ່ວຄາວ) ຫຼື ເສຍພາສີຫຼຸດຜ່ອນ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີສະບັບປັບປຸງສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ: 2826/ກງ, ລົງວັນທີ: 22 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ແຈ້ງການແນະນຳຂອງກະຊວງການເງິນ, ສະບັບເລກທີ: 2350/ກງ, ລົງວັນທີ: 18 ສິງຫາ 2018 ກ່ຽວກັບການແຈ້ງເສຍພາສີ-ອາກອນ ເພື່ອປ່ຽນກຳມະສິດ ພາຫະນະ ແລະ ກົນຈັກໜັກ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ (ນຳເຂົ້າຊົ່ວຄາວ) ຫຼື ເສຍພາສີຫຼຸດຜ່ອນ.

ເພື່ອຮັບປະກັນໃນການຈັດຕັ້ງຜັນຂະຫຍາຍ ແຈ້ງການແນະນຳຂອງກະຊວງການເງິນ ສະບັບເລກທີ 2350/ກງ, ລົງວັນທີ 18 ກໍລະກົດ 2018 ກ່ຽວກັບການແຈ້ງເສຍພາສີ-ອາກອນ ເພື່ອປ່ຽນກຳມະສິດ ພາຫະນະ ແລະ ກົນຈັກໜັກ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ ( ນຳເຂົ້າຊົ່ວຄາວ) ຫຼືເສຍພາສີຫຼຸດຜ່ອນ ໃຫ້ມີປະສິດທິຜົນຕາມລະດັບຄາດໝາຍ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

## ກົມພາສີ ອອກຄຳແນະນຳເພີ່ມເຕີມ, ດັ່ງນີ້:

1. ມອບໃຫ້ ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈຳແຂວງ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ປະສານສົມທົບກັນ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຈ້ງການແນະນຳຂອງກະຊວງການເງິນ ສະບັບເລກທີ 2350/ກງ, ລົງວັນທີ 18 ກໍລະກົດ 2018 ກ່ຽວກັບການແຈ້ງເສຍພາສີ-ອາກອນ ເພື່ອປ່ຽນກຳມະສິດ ພາຫະນະ ແລະ ກົນຈັກໜັກ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ (ນຳເຂົ້າຊົ່ວຄາວ) ຫຼືເສຍພາສີຫຼຸດຜ່ອນ ຢ່າງເປັນເອກະພາບ.
2. ການກຳນົດມູນຄ່າແຈ້ງພາສີແມ່ນໃຫ້ຖືເອົາຕາມລາຄາສົມທຽບ ທີ່ມີການນຳເຂົ້າແຈ້ງເສຍພາສີໃນເບື້ອງຕົ້ນຕາມໃບແຈ້ງພາສີເປັນລາຍລະອຽດ ເປັນພື້ນຖານໃນການປະເມີນລາຄາ ແຈ້ງເສຍພາສີຕາມລະບຽບການ.
   - ສຳລັບໃບແຈ້ງພາສີເປັນລາຍລະອຽດໃຫ້ຖືເອົາຕາມລະບອບໃບແຈ້ງພາສີ (IM4 ແລະ IM5) ທີ່ເປັນເອກະສານຫຼັກຖານອ້າງອີງໃນການລົງບັນຊີຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍບັນຊີ ແລະ ກົດໝາຍວ່າດ້ວຍພາສີ, ສ່ວນລະບອບໃບແຈ້ງພາສີ (IM8) ແມ່ນໃບແຈ້ງພາສີຄ້ຳປະກັນເອົາສິນຄ້າອອກຈາກສາງ ຫຼື

ດ່ານກ່ອນການແຈ້ງພາສີເປັນລາຍລະອຽດ ຊຶ່ງຈະຕ້ອງໄດ້ສະສາງການຄໍ້າປະກັນຕາມລະບຽບການນໍາໃຊ້ລະບອບໃບແຈ້ງພາສີກໍານົດ ຈຶ່ງຖືວ່າຜ່ານຂັ້ນຕອນການແຈ້ງພາສີເປັນລາຍລະອຽດຕາມລະບຽບການ.

3. ການຫັກຄ່າຫຼຸ້ຍຫ້ຽນ ພາຫະນະ ແລະ ກົນຈັກໜັກປະເພດຕ່າງໆ ໃຫ້ຫັກລົບຄ່າຫຼຸ້ຍຫ້ຽນຕາມຕາຕະລາງ 7 ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ (ປະຕິບັດຕາມຫຼັກການຄະນິດສາດ).
   - ສໍາລັບປີຜະລິດ, ປະເທດຜະລິດ, ຄວາມແຮງ, ເລກຈັກ, ເລກຖັງ ແມ່ນຕ້ອງໄດ້ມີການຢັ້ງຢືນເປັນທາງການຈາກຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອເປັນເອກະສານປະກອບໃນການແຈ້ງເສຍພາສີ-ອາກອນ.
4. ວິທີການຄິດໄລ່ຄ່າພາສີ-ອາກອນ ແລະ ມາດຕະການປັບໄໝພາຫະນະ ແລະ ກົນຈັກໜັກປະເພດຕ່າງໆແມ່ນໃຫ້ປະຕິບັດຕາມແຈ້ງການແນະນໍາຂອງກະຊວງການເງິນ, ສະບັບເລກທີ: 2350/ກງ, ລົງວັນທີ: 18 ສິງຫາ 2018 ແລະ ກົດໝາຍວ່າດ້ວຍພາສີ.
5. ໃນກໍລະນີທີ່ຂໍ້ມູນຫຼັກຖານອ້າງອີງ ແລະ ເອກະສານຕ່າງໆບໍ່ຄົບຖ້ວນຕາມເງື່ອນໄຂທີ່ໄດ້ກໍານົດໃນແຈ້ງການແນະນໍາຂອງກະຊວງການເງິນ, ສະບັບເລກທີ: 2350/ກງ, ລົງວັນທີ: 18 ສິງຫາ 2018 ແມ່ນໃຫ້ດໍາເນີນການແກ້ໄຂເປັນກໍລະນີຄະດີລັດລັກລອບນໍາເຂົ້າໜີພາສີ ຕາມແຈ້ງການຂອງກະຊວງການເງິນ, ສະບັບເລກທີ: 1984/ກງ, ລົງວັນທີ: 27 ກໍລະກົດ 2018 ແລະ ຕາມລະບຽບກົດໝາຍວ່າດ້ວຍພາສີ.
6. ມອບໃຫ້ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີ ປະຈໍາແຂວງໃນຂອບເຂດທົ່ວປະເທດ ປະສານສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.
7. ການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຄວາມຫຍຸ້ງຍາກ ໃຫ້ສັງລວມລາຍງານມາຍັງກົມພາສີ ເພື່ອມີວິທີການແກ້ໄຂຕາມກົດໝາຍ ແລະ ລະບຽບການ

ດັ່ງນັ້ນ, ຈຶ່ງແຈ້ງການມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ

ບຸນປະເສີດ ສີກຸນລະບຸດ

<u>ບ່ອນນໍາສົ່ງ:</u>

- ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ — 01 ສະບັບ ເພື່ອຊາບ
- ຮອງລັດຖະມົນຕີກະຊວງການເງິນ ( ຜູ້ຊີ້ນໍາ) — 01 ສະບັບ ຕາງລາຍງານ
- ຫ້ອງການກະຊວງການເງິນ — 01 ສະບັບ ເພື່ອຊາບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ:...2350.../ກງ
ນະຄອນຫຼວງວຽງຈັນ, ວັນທີ:.18 ກໍລະກົດ 2018

# ແຈ້ງການແນະນຳ
## ກ່ຽວກັບການແຈ້ງເສຍພາສີ-ອາກອນ ເພື່ອປ່ຽນກຳມະສິດ ພາຫະນະ ແລະ ກົນຈັກໜັກ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ (ນຳເຂົ້າຊົ່ວຄາວ) ຫຼື ເສຍພາສີຫຼຸດຜ່ອນ.

---

- ອີງຕາມກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະກົດໝາຍວ່າດ້ວຍພາສີ ສະບັບປັບປຸງສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ສະບັບປັບປຸງ ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ບົດບັນທຶກກອງປະຊຸມລະຫວ່າງກະຊວງການເງິນ ແລະ ບັນດາຂະແໜງການກ່ຽວຂ້ອງ ທີ່ກະຊວງການເງິນ ຄັ້ງວັນທີ 07 ມິຖຸນາ 2018;
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 03512/ກພສ, ລົງວັນທີ 04 ກໍລະກົດ 2018.

ໃນໄລຍະຜ່ານມາ ບັນດາພາຫະນະ ແລະ ກົນຈັກໜັກ ທີ່ນຳເຂົ້າໃນລະບອບຍົກເວັ້ນ, ງົດເກັບ (ນຳເຂົ້າຊົ່ວຄາວ) ແລະ ເສຍພາສີຫຼຸດຜ່ອນ ເພື່ອຮັບໃຊ້ບັນດາໂຄງການລົງທຶນ, ທາງການທູດ, ອົງການຈັດຕັ້ງສາກົນ ແລະ ລົດຂຶ້ນທະບຽນປ້າຍລັດ ບໍລິຫານ. ໃນເວລາປ່ຽນກຳມະສິດນຳໃຊ້ພາຍໃນ ສປປ ລາວ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການເຫັນວ່າຍັງ ບໍ່ທັນມີຄວາມເປັນເອກະພາບ, ຍັງມີຈຳນວນໜຶ່ງ ນຳໃຊ້ບໍ່ຖືກຕ້ອງກັບເປົ້າໝາຍ ແລະ ກິດຈະກຳ ໂດຍສະເພາະລົດທີ່ນຳເຂົ້າ ມາຮັບໃຊ້ໂຄງການລົງທຶນຕ່າງໆ. ນອກນັ້ນ, ຍັງມີບາງປະກົດການສວຍໃຊ້ຊ່ອງວ່າງດ້ານລະບຽບກົດໝາຍ ແລະ ໄດ້ນຳ ພາຫະນະ ຫລື ກົນຈັກໜັກ ທີ່ໄດ້ຮັບນະໂຍບາຍຍົກເວັ້ນພາສີ-ອາກອນ ໄປຈຳໜ່າຍຂາຍທົ່ວໄປ ຊຶ່ງຜິດຕໍ່ລະບຽບກົດໝາຍ ແລະ ສ້າງຜົນເສຍຫາຍທາງດ້ານງົບປະມານແຫ່ງລັດ.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກແຈ້ງການແນະນຳ ດັ່ງນີ້:

1. ພະຫະນະ ແລະກົນຈັກໜັກທີ່ນຳເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນ

1.1. ບຸກຄົນ, ນິຕິບຸກຄົນ, ຜູ້ທີ່ຄອບຄອງພາຫະນະ ຫລື ກົນຈັກໜັກ ທີ່ນຳເຂົ້າຍົກເວັ້ນ, ເສຍພາສີຫຼຸດຜ່ອນ, ງົດເກັບພາສີ (ນຳເຂົ້າຊົ່ວຄາວ) ຕາມນະໂຍບາຍສົ່ງເສີມການລົງທຶນ ທີ່ນຳໃຊ້ບໍ່ຖືກເປົ້າໝາຍ ຫຼື ໝົດອາຍຸການ ນຳໃຊ້ປ້າຍຊົ່ວຄາວ ຕ້ອງໄດ້ມາແຈ້ງເສຍພາສີ-ອາກອນ ແລະ ພັນທະອື່ນ ເພື່ອປ່ຽນກຳມະສິດນຳໃຊ້ ໃຫ້ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

1.2. ຂັ້ນຕອນໃນການຈັດຕັ້ງປະຕິບັດ ໃຫ້ນຳເອົາພາຫະນະ ແລະ ກົນຈັກໜັກ ທີ່ຕົນຄອບຄອງ ພ້ອມສຳນວນເອກະສານໃບແຈ້ງພາສີເປັນລາຍລະອຽດ ທີ່ນຳເຂົ້າເບື້ອງຕົ້ນ, ໃບອະນຸຍາດຂອງຂະແໜງແຜນການ ແລະ ການລົງທຶນ, ໃບອະນຸຍາດລຶບລ້າງປ້າຍຂອງຂະແໜງໂຍທາທິການແລະຂົນສົ່ງ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ໄປພົວພັນຢູ່ບັນດາກອງຄຸ້ມຄອງພາສີ ຫລື ກອງກວດກາພາສີ ປະຈຳແຂວງ ໃນຂອບເຂດທົ່ວປະເທດ ເພື່ອດຳເນີນການແຈ້ງເສຍພາສີ-ອາກອນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

1.3. ສຳລັບມູນຄ່າຄິດໄລ່ຄ່າພາສີ-ອາກອນ ແມ່ນຖືເອົາຕາມມູນຄ່າທີ່ໄດ້ແຈ້ງໃນໃບແຈ້ງພາສີເປັນລາຍລະອຽດໃນເວລານຳເຂົ້າເບື້ອງຕົ້ນ, ສຳລັບພາຫະນະ ຫລື ກົນຈັກໜັກ ທີ່ໄດ້ນຳເຂົ້າມາຮັບໃຊ້ໂຄງການລົງທຶນ ເກີນ <u>02 ປີ</u> ຂຶ້ນໄປ (ນັບແຕ່ມື້ນຳເຂົ້າ) ຈຶ່ງອະນຸຍາດໃຫ້ຫັກລົບຄ່າຫຼຸ້ຍຫ້ຽນ ຕາມຕາຕະລາງ 7 ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອເປັນພື້ນຖານຄິດໄລ່ຄ່າພາສີ-ອາກອນ ຕາມກົດໝາຍ ແລະ ລະບຽບການ.

1.4. ການຄິດໄລ່ຄ່າພາສີ-ອາກອນ ແລະ ພັນທະອື່ນ ເພື່ອປຽນກຳມະສິດໃນກໍລະນີດັ່ງກ່າວແມ່ນໃຫ້ປະຕິບັດ, ຄື:

- ພາຍໃນກຳນົດ 30 ວັນ ນັບແຕ່ວັນອອກໃບອະນຸຍາດຂອງຂະແໜງແຜນການ ແລະ ການລົງທຶນ ໃຫ້ເສຍພາສີ-ອາກອນ ແລະ ພັນທະອື່ນຕາມກົດໝາຍ ແລະ ລະບຽບການ.
- ຖ້າມາແຈ້ງເສຍພາສີ-ອາກອນ ພາຍໃນ 31 ວັນ ຫາ 180 ວັນ ນັບແຕ່ວັນອອກໃບອະນຸຍາດຂອງຂະແໜງແຜນການ ແລະ ການລົງທຶນ ໃຫ້ປະຕິບັດມາດຕະການ ຕາມມາດຕາ 88 ຂອງກົດໝາຍວ່າດ້ວຍພາສີ (ເສຍພາສີ-ອາກອນ ແລະ ປັບໄໝ <u>10%</u> ຂອງມູນຄ່າພາຫະນະ ແລະ ກົນຈັກ).
- ຖ້າມາແຈ້ງເສຍພາສີ-ອາກອນ ພາຍຫຼັງ 181 ວັນ ຂຶ້ນໄປ ນັບແຕ່ວັນອອກໃບອະນຸຍາດຂອງຂະແໜງແຜນການ ແລະ ການລົງທຶນ ແມ່ນໃຫ້ປະຕິບັດຕາມມາດຕາ 89 ຂອງກົດໝາຍວ່າດ້ວຍພາສີ (ເສຍພາສີ-ອາກອນ ແລະ ປັບໃໝ <u>30%</u> ຂອງມູນຄ່າພາຫະນະ ແລະ ກົນຈັກ).

2. ພາຫະນະ ທີ່ນຳເຂົ້າມາຮັບໃຊ້ທາງການທູດ ແລະ ອົງການຈັດຕັ້ງສາກົນ

2.1. ພາຫະນະ ທີ່ນຳເຂົ້າມາຮັບໃຊ້ທາງການທູດ ແລະ ອົງການຈັດຕັ້ງສາກົນ ທີ່ກຳນົດໃນມາດຕາ 50 ແລະ 51 ຕາມກົດໝາຍວ່າດ້ວຍພາສີ, ພາຍຫຼັງສິ້ນສຸດໜ້າທີ່ຢູ່ ສປປ ລາວ ແລ້ວໃຫ້ນຳພາຫະນະດັ່ງກ່າວອອກຄືນ, ຖ້າຫາກມີຈຸດປະສົງຊົມໃຊ້ພາຍໃນ ສປປ ລາວ ກໍ່ຕ້ອງໄດ້ເສຍພາສີ-ອາກອນ ແລະ ພັນທະອື່ນ ຕາມທີ່ກຳນົດໃນມາດຕາ 52 ຂອງກົດໝາຍວ່າດ້ວຍພາສີ.

2.2. ຂັ້ນຕອນໃນການຈັດຕັ້ງປະຕິບັດ ຕ້ອງມີສະໂນດນຳສົ່ງຈາກກົມພິທີການທູດ, ກະຊວງການຕ່າງປະເທດ ແລະ ໃບອະນຸຍາດລຶບລ້າງປ້າຍຂອງກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ພ້ອມສຳນວນເອກະສານໃບແຈ້ງພາສີເປັນລາຍລະອຽດ ທີ່ນຳເຂົ້າເບື້ອງຕົ້ນ ແລ້ວນຳພາຫະນະດັ່ງກ່າວໄປພົວພັນຢູ່ກົມພາສີ (ພະແນກກວດສອບຄືນການແຈ້ງພາສີ) ກະຊວງການເງິນ ເພື່ອດຳເນີນການແຈ້ງເສຍພາສີ-ອາກອນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

2.3. ສຳລັບມູນຄ່າຄິດໄລ່ຄ່າພາສີ-ອາກອນ ແມ່ນຖືເອົາຕາມມູນຄ່າທີ່ໄດ້ແຈ້ງໃນໃບແຈ້ງພາສີເປັນລາຍລະອຽດໃນເວລານຳເຂົ້າເບື້ອງຕົ້ນ, ຫັກລົບຄ່າຫຼຸ້ຍຫ້ຽນ ຕາມຕາຕະລາງ 7 ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ ເພື່ອເປັນພື້ນຖານຄິດໄລ່ຄ່າພາສີ-ອາກອນ ຕາມກົດໝາຍ ແລະ ລະບຽບການ.

2.4. ໃນກໍລະນີຜູ້ຄອບຄອງພາຫະນະດັ່ງກ່າວຫາກບໍ່ມາດຳເນີນການແຈ້ງເສຍພາສີ-ອາກອນຕາມກົດໝາຍ ແລະ ລະບຽບການ ພາຍໃນກຳນົດ ເວລາ 30 ວັນ ນັບແຕ່ວັນທີ ກົມພິທີການທູດ, ກະຊວງການຕ່າງປະເທດ ໄດ້ອອກສະໂນດນຳສົ່ງ ໃຫ້ປະຕິບັດມາດຕະການ, ຄື:

- ຖ້າມາແຈ້ງເສຍພາສີ-ອາກອນ ຊັກຊ້າພາຍໃນ 31 ວັນ ຫາ 180 ວັນ ໃຫ້ປະຕິບັດມາດຕະການ ຕາມມາດຕາ 88 ຂອງກົດໝາຍວ່າດ້ວຍພາສີ (ເສຍພາສີ-ອາກອນ ແລະ ປັບໃໝ 10% ຂອງມູນຄ່າພາຫະນະ).
- ຖ້າມາແຈ້ງເສຍພາສີ-ອາກອນ ຊັກຊ້າພາຍຫຼັງ 181 ວັນ ຂຶ້ນໄປ ໃຫ້ປະຕິບັດມາດຕະການ ຕາມມາດຕາ 89 ຂອງກົດໝາຍວ່າດ້ວຍພາສີ (ເສຍພາສີ-ອາກອນ ແລະ ປັບໃໝ 30% ຂອງມູນຄ່າພາຫະນະ).

3. **ພາຫະນະຂຶ້ນທະບຽນປ້າຍລັດບໍລິຫານ**

3.1. ພາຫະນະຂຶ້ນທະບຽນປ້າຍລັດບໍລິຫານ ທີ່ຍັງບໍ່ທັນໄດ້ເສຍພາສີ-ອາກອນ ແລະ ພັນທະອື່ນໃນເວລານຳເຂົ້າ, ທີ່ການຈັດຕັ້ງໄດ້ອະນຸມັດມອບໂອນກຳມະສິດໃຫ້ເປັນຂອງບຸກຄົນນຳໃຊ້ ຕ້ອງໄດ້ເສຍພາສີຕາມກົດໝາຍ ແລະ ລະບຽບການ.

3.2. ຂັ້ນຕອນໃນການຈັດຕັ້ງປະຕິບັດ ຕ້ອງມີຂໍ້ຕົກລົງຂອງອົງການຈັດຕັ້ງທີ່ຄຸ້ມຄອງພາຫະນະຄັນດັ່ງກ່າວ ເພື່ອມອບ-ໂອນໃຫ້ແກ່ບຸກຄົນ, ບົດບັນທຶກກວດກາຕີລາຄາລົດເກົ່າທີ່ໃຊ້ແລ້ວຄືນໃໝ່ຂອງກົມຄຸ້ມຄອງຊັບສິນຂອງລັດ ແລະ ຄະນະກຳມະການຕີລາຄາລົດ, ພ້ອມສຳນວນເອກະສານໃບແຈ້ງພາສີເປັນລາຍລະອຽດ ທີ່ນຳເຂົ້າເບື້ອງຕົ້ນ ແລ້ວນຳພາຫະນະດັ່ງກ່າວໄປພົວພັນຢູ່ (ພະແນກກວດສອບຄືນການແຈ້ງພາສີ) ກົມພາສີ, ກະຊວງການເງິນ ຫຼື ລັດຖະການພາສີບ່ອນທີ່ເຂົ້າຮ່ວມເປັນຄະນະກຳມະການໃນການຕີລາຄຸນນະພາບລົດ ເພື່ອດຳເນີນການແຈ້ງເສຍພາສີ-ອາກອນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ ພາຍໃນກຳນົດເວລາ 45 ວັນ ຢ່າງເຂັ້ມງວດ.

3.3. ການຄິດໄລ່ຄ່າພາສີ-ອາກອນ ແມ່ນໃຫ້ປະຕິບັດຕາມບົດບັນທຶກກວດກາຕີລາຄາລົດເກົ່າທີ່ໃຊ້ແລ້ວຄືນໃໝ່ຂອງກົມຄຸ້ມຄອງຊັບສິນຂອງລັດ ແລະ ຄະນະກຳມະການຕີລາຄາລົດ.

3.4. ໃນກໍລະນີຜູ້ທີ່ໄດ້ຮັບອະນຸມັດມອບໂອນກຳມະສິດພາຫະນະດັ່ງກ່າວ ຫາກມາແຈ້ງເສຍພາສີ-ອາກອນຊັກຊ້າເກີນກຳນົດເວລາ 45 ວັນ ນັບແຕ່ວັນເຊັນບົດບັນທຶກກວດກາຕີລາຄາລົດເກົ່າທີ່ໃຊ້ແລ້ວຄືນໃໝ່ຂອງກົມຄຸ້ມຄອງຊັບສິນຂອງລັດ, ຕ້ອງໄດ້ກວດກາ ແລະ ມີການຢັ້ງຢືນຈາກຄະນະກຳມະການກວດກາຕີລາຄາລົດດັ່ງກ່າວ ຄືນໃໝ່, ຖ້າຜູ້ຄອບຄອງພາຫະນະບໍ່ມີເຫດຜົນທີ່ໜ້າເຊື່ອຖືໄດ້ໃນການແຈ້ງເສຍພາສີຊັກຊ້າ ແມ່ນໃຫ້ປະຕິບັດມາດຕະການ ຕາມມາດຕາ 88 ຂອງກົດໝາຍວ່າດ້ວຍພາສີ (ເສຍພາສີ-ອາກອນ ແລະ ປັບໃໝ 10% ຂອງມູນຄ່າພາຫະນະ).

4. ໃນກໍລະນີຜູ້ທີ່ຄອບຄອງພາຫະນະ ມີເຈດຕະນາລົບຫຼີກໜີພາສີ ບໍ່ນຳພາຫະນະ ຫຼື ກົນຈັກມາແຈ້ງເສຍພາສີ-ອາກອນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ, ຫາກຖືກເຈົ້າໜ້າທີ່ພາສີ ຫຼື ເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງຈັບກຸມໄດ້ ມອບໃຫ້ລັດຖະການພາສີດຳເນີນສະສາງຄະດີ ຕາມກົດໝາຍວ່າດ້ວຍພາສີ ຫຼື ກົດໝາຍອື່ນທີ່ກ່ຽວຂ້ອງ ຕາມກໍລະນີໜັກ ຫຼື ເບົາ ທີ່ກົດໝາຍໄດ້ກຳນົດ.

5. ຄ່າປັບໃໝທີ່ໄດ້ຈາກການດຳເນີນຄະດີ ແມ່ນໃຫ້ຈັດຕັ້ງປະຕິບັດຕາມບົດແນະນຳຂອງກົມພາສີ ສະບັບເລກທີ 4148/ກພສ ລົງວັນທີ 03/03/2016.

6. ການຈັດຕັ້ງປະຕິບັດ :

6.1. ກົມພາສີ, ກະຊວງການເງິນ

- ຕິດຕາມ, ກວດກາ, ໃຫ້ຄຳແນະນຳບັນດາກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈຳແຂວງ ໃນການຈັດຕັ້ງປະຕິບັດ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.
- ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈຳແຂວງໃນຂອບເຂດທົ່ວປະເທດ ເພີ່ມທະວີການເຄື່ອນໄຫວວຽກງານຕ້ານສະກັດກັ້ນໃຫ້ເຂັ້ມແຂງ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການດຳເນີນການແກ້ໄຂສະສາງຄະດີ.

6.2. ກົມຄຸ້ມຄອງຊັບສິນຂອງລັດ, ກະຊວງການເງິນ

- ຕິດຕາມ, ກວດກາ, ໃຫ້ຄຳແນະນຳແກ່ອົງການຈັດຕັ້ງລັດໃນການມອບໂອນກຳມະສິດພາຫະນະປ້າຍລັດບໍລັດບໍລິຫານທີ່ຍັງບໍ່ໄດ້ເສຍພາສີ-ອາກອນ ແລະ ພັນທະອື່ນ ໃຫ້ແກ່ບຸກຄົນນຳໃຊ້ ຕ້ອງໃຫ້ເສຍພາສີ-ອາກອນ ແລະ ພັນທະອື່ນຕາມກົດໝາຍ ແລະ ລະບຽບການ.
- ເອົາໃຈໃສ່ຊີ້ນຳບັນດາຂະແໜງຊັບສິນຂອງລັດໃນຂອບເຂດທົ່ວປະເທດ ເອົາໃຈໃສ່ຄຸ້ມຄອງກວດກາ ແລະ ຕີລາຄາພາຫະນະເກົ່າທີ່ໃຊ້ແລ້ວຄືນໃຫ່ມ ໃຫ້ເໝາະສົມ ແລະ ແທດເໝາະກັບສະພາບຄວາມເປັນຈິງຂອງພາຫະນະ.

6.3. ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ

- ຕິດຕາມ, ກວດກາ ການອອກປ້າຍໃນການທັບກຳມະສິດນຳໃຊ້ ພະຫະນະ ແລະ ກົນຈັກໜັກທີ່ນຳເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນ, ພາຫະນະທີ່ນຳເຂົ້າມາຮັບໃຊ້ທາງການທູດ ແລະ ອົງການຈັດຕັ້ງສາກົນ ຕ້ອງໄດ້ແຈ້ງເສຍພາສີ-ອາກອນ ແລະ ພັນທະອື່ນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.
- ຕິດຕາມ, ກວດກາບັນຊີ ບັນດາເປົ້າໝາຍພາຫະນະ ແລະ ກົນຈັກນຳເຂົ້າຊົ່ວຄາວ ທີ່ໝົດກຳນົດການນຳໃຊ້ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນກ່ຽວຂ້ອງໃນການດຳເນີນການຕິດຕາມ ກວດກາ.

6.4. ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ

- ຕິດຕາມ, ກວດກາ, ໃຫ້ຄຳແນະນຳແກ່ບັນດາໂຄງການການລົງທຶນໃນຂອບເຂດທົ່ວປະເທດ ທີ່ນຳເຂົ້າພາຫະນະ ຫຼື ກົນຈັກ ຍົກເວັ້ນ, ເສຍພາສີຫຼຸດຜ່ອນ, ງົດເກັບພາສີ (ນຳເຂົ້າຊົ່ວຄາວ) ຕາມນະໂຍບາຍສົ່ງເສີມການລົງທຶນ, ພາຍຫຼັງສິ້ນສຸດໂຄງການ ຫຼື ໝົດອາຍຸການນຳໃຊ້ປ້າຍຊົ່ວຄາວຕ້ອງໄດ້ມາແຈ້ງເສຍພາສີ - ອາກອນ ແລະ ພັນທະອື່ນ ເພື່ອປ່ຽນກຳມະສິດນຳໃຊ້ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.
- ສ້າງກົນໄກຕິດຕາມຈຳນວນພາຫະນະ, ກົນຈັກ ໃນການອອກໃບອະນຸຍາດ ແລະ ຫັກລົບອອກຈາກບັນຊີພາຍຫຼັງສິ້ນສຸດໂຄງການ ເພື່ອເປັນອີງໃຫ້ແກ່ຂະແໜງການກ່ຽວຂ້ອງໃນການຕິດຕາມ ກວດກາ.

6.5. ກົມພິທີການທູດ, ກະຊວງການຕ່າງປະເທດ

- ຕິດຕາມ, ກວດກາ ໃຫ້ຄຳແນະນຳແກ່ບັນດາສະຖານທູດ, ອົງການຈັດຕັ້ງສາກົນ, ພາຍຫຼັງສິ້ນສຸດໜ້າທີ່ຢູ່ ສປປ ລາວແລ້ວໃຫ້ນຳພາຫະນະດັ່ງກ່າວອອກຄືນ, ຖ້າຫາກມີຈຸດປະສົງຊົມໃຊ້ພາຍໃນ ສປປ ລາວ ກໍ່ຕ້ອງໄດ້ເສຍພາສີ-ອາກອນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.
- ຕິດຕາມ, ກວດກາຈຳນວນພາຫະນະ ໃນການລົບລ້າງອອກຈາກບັນຊີພາຫະນະທີ່ນຳໃຊ້ທາງການທູດ ແລະ ອົງການຈັດຕັ້ງສາກົນ ເພື່ອອອກສະໂນດນຳສົ່ງໃຫ້ແກ່ພາກສ່ວນກ່ຽວຂ້ອງເພື່ອດຳເນີນການຕິດຕາມ ກວດກາ

7. ມອບໃຫ້ຫ້ອງການກະຊວງການເງິນ, ບັນດາກົມອ້ອມຂ້າງກະຊວງ, ພະແນກການເງິນປະຈຳແຂວງ ແລະ ພາກສ່ວນກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເອົາໃຈໃສ່ປະສານສົມທົບກັນ ຕິດຕາມຊີ້ນຳການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ສຳເລັດຜົນຕາມຄາດໝາຍ, ພ້ອມນັ້ນ ກໍ່ໃຫ້ໂຄສະນາເຜີຍແຜ່ເນື້ອໃນແຈ້ງການສະບັບນີ້ ໃຫ້ທຸກພາກສ່ວນໃນສັງຄົມ ເຊື່ອມຊຶມ ແລະ ເຂົ້າໃຈ ເພື່ອພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

8. ແຈ້ງການສະບັບນີ້ປ່ຽນແທນແຈ້ງການຂອງກະຊວງການເງິນ ສະບັບເລກທີ 1825/ກງ, ລົງວັນທີ 15 ມິຖຸນາ 2018 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮອງນາຍົກລັດຖະມົນຕີ
ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ

ບ່ອນນຳສົ່ງ :
- ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ 01 ສະບັບ (ເພື່ອຊາບ)
- ບັນດາເຈົ້າແຂວງ 01 ສະບັບ (ເພື່ອຊາບ)
- ກະຊວງໂຍທາທິການ ແລະ ຂົນສົ່ງ 01 ສະບັບ (ເພື່ອຊາບ)
- ກະຊວງແຜນການ ແລະ ການລົງທຶນ 01 ສະບັບ (ເພື່ອຊາບ)
- ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ (ເພື່ອຊາບ)
- ກະຊວງການຕ່າງປະເທດ 01 ສະບັບ (ເພື່ອຊາບ)
- ຫ້ອງການກະຊວງການເງິນ 01 ສະບັບ (ເພື່ອຊາບ)
- ພະແນກການເງິນນະຄອນຫຼວງ, ບັນດາແຂວງ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ກົມພາສີ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ກົມຄຸ້ມຄອງຊັບສິນຂອງລັດ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ກົມຂົນສົ່ງ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ກົມສົ່ງເສີມການລົງທຶນ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ກົມພິທີການທູດ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)